ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 203 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 30 / 07 / 25

# ມະຕິ
## ຄະນະປະຈຳສະພາແຫ່ງຊາດ
## ກ່ຽວກັບການປັບປຸງການໃສ່ສີໃສ່ເຄື່ອງໝາຍຊາດ

--------------------

- ອີງຕາມມາດຕາ 114 ຂອງລັດຖະທຳມະນູນ ສະບັບປີ 2025;
- ອີງຕາມມາດຕາ 33 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2015 ແລະ ມາດຕາ 33 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020;

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2025 ໃນຂອບເຂດທົ່ວປະເທດ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ປ່ຽນສີເຄື່ອງໝາຍຊາດ ຈາກສີດຳ ເປັນສີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 114 ຂອງລັດຖະທຳມະນູນ ສະບັບປີ 2025.

**ມາດຕາ 2** ເຫັນດີໃຫ້ປັບຍອດໃບໄມ້ຢູ່ໃນເຄື່ອງໝາຍຊາດອອກໜ້ອຍໜຶ່ງ ເພື່ອບໍ່ໃຫ້ບັງຮູບທາດຫຼວງ.

**ມາດຕາ 3** ມອບໃຫ້ຄະນະເລຂາທິການສະພາແຫ່ງຊາດ ເປັນຜູ້ຮັບຜິດຊອບ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ໃຫ້ມີປະສິດທິພາບ, ປະສິດທິຜົນ.

**ມາດຕາ 4** ສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກການຈັດຕັ້ງໃນລະບົບການເມືອງ ປະຊາທິປະໄຕປະຊາຊົນ ຈົ່ງຮັບຮູ້ ແລະ ຮ່ວມມືຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ໄດ້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ
ປະທານ

ປອ ໄຊສົມພອນ ພົມວິຫານ